# ບົດທີ 2
# ການນຳໃຊ້ຫຼັກສູດສະບັບປັບປຸງໃໝ່ຊັ້ນປະຖົມສຶກສາປີທີ 2
# ການວັດ ແລະ ປະເມີນຜົນ

## 1. ຂະບວນການວັດ ແລະ ປະເມີນຜົນ

ການປະເມີນຜົນເພື່ອປັບປຸງການຮຽນຈະເກີດຂຶ້ນໃນເວລາສອນເພື່ອຊ່ວຍໃຫ້ຄູເຫັນໄດ້ວ່ານັກຮຽນເຂົ້າໃຈຫຼາຍປານໃດ ແລະ ນັກຮຽນຕ້ອງການຄວາມຊ່ວຍເຫຼືອຫຍັງແດ່ ເພື່ອເຮັດໃຫ້ເຂົາເຈົ້າບັນລຸຈຸດປະສົງຂອງການຮຽນເຂົາເຈົ້າ.

ການປະເມີນຜົນເພື່ອສະຫຼຸບຜົນການຮຽນ ແມ່ນຊ່ວຍໃຫ້ຄູເຫັນແຈ້ງວ່າ ນັກຮຽນໄດ້ບັນລຸຈຸດປະສົງຂອງບົດຮຽນ ຫຼື ບໍ່. ຕາມປົກກະຕິແມ່ນດຳເນີນການໃນຕອນສຸດທ້າຍຂອງບົດຮຽນ.

ເວລາຈະປະເມີນນັກຮຽນນຈະມີສັນຍາລັກສະແດງບອກໃນບົດສອນຄື ມີກ່ອງທີ່ມີລາຍລະອຽດກ່ຽວກັບ " ການວັດ ແລະ ການປະເມີນຜົນ" ຢູ່ໃນບົດສອນທີ່ແຈ້ງບອກວ່າຕ້ອງສາມາດເຮັດການປະເມີນຜົນຢູ່ບ່ອນໃດ.

ຕາມປົກກະຕິແລ້ວນັກສຶກສາຈະເຮັດການປະເມີນເພື່ອສະຫຼຸບຜົນການຮຽນໃນຂັ້ນຕອນຝຶກປະຕິບັດ ແລະ ນຳໃຊ້ ແລະ ຂັ້ນສະຫຼຸບ ຂອງບົດສອນ.

ຢູ່ໃນບົດສອນໜຶ່ງຈະມີເກນການປະເມີນແບບຮູບຣິກຢູ່ໜຶ່ງເກນສຳລັບທຸກໆວິຊາຍົກເວັ້ນວິຊາພາສາລາວທີ່ມີເກນການປະເມີນແບບຮູບຣິກຫຼາຍເກນ ເພາະວ່າບົດສອນໜຶ່ງແມ່ນຈະຕ້ອງສອນຢູ່ 10 ຊົ່ວໂມງ.

ເກນການປະເມີນແບບຮູບຣິກຈະມີຈຳນວນການອະທິບາຍເກນບໍ່ຄືກັນ ຈຳນວນການອະທິບາຍຈະແຕກຕ່າງກັນເຊິ່ງຈະມີຕັ້ງແຕ່ 3 ລະດັບ (0-2 ) ຫາ 4 ລະດັບ ( 0-4 )

ເກນການປະເມີນແບບຮູບຣິກສຳລັບວິຊາພາສາລາວມີ 28 ເກນ

1. **ການອ່ານ ແລະ ການຂຽນ ( 1 – 16 )**
   - ອອກສຽງ ແລະ ຕົວອັກສອນ ( 1 - 3 )
   - ອ່ານຄຳສັບ ແລະ ບົດເລື່ອງ ( 4 – 8 ຂ )
   - ຂຽນຄຳສັບ ແລະ ບົດເລື່ອງ ( 9 – 16 )
2. **ການຟັງ ແລະ ການເວົ້າ ( 17-22 )**
3. **ປຶ້ມນິທານ ( 23-26 )**
4. **ປຶ້ມອ່ານເສີມ ( 27-28 )**

## 2. ການສັງເກດ, ການຈົດບັນທຶກ ແລະ ການໃຫ້ຄະແນນ

ກ່ອນຈະຂຶ້ນຫ້ອງສອນ, ຄູສອນຕ້ອງໄດ້ກະກຽມສຳລັບການວັດ ແລະ ປະເມີນຜົນຄື: ຄູສອນຕ້ອງອ່ານລາຍລະອຽດບົດສອນ ແລະ ເກນການປະເມີນແບບຮູບຣິກຢູ່ໃນປຶ້ມຄູ່ມືຄູກ່ອນລ່ວງໜ້າ, ກະກຽມອຸປະກອນຕ່າງໆທີ່ຈຳເປັນສຳລັບກິດຈະກຳ,ຕັດສິນໃຈວ່າຈະເຮັດການປະເມີນນັກຮຽນຄົນໃດ ແລະ ຂຽນວັນທີ, ຊື່ບົດຮຽນ ແລະ ຊື່ນັກຮຽນ ( ຜູ້ທີ່ຈະເຮັດການປະເມີນຜົນນັ້ນ ) ໃສ່ໃນປຶ້ມບັນທຶກ.

ຄູສອນຍ່າງເລາະໄປມາອ້ອມຫ້ອງຮຽນກໍ່ເພື່ອໃຫ້ໄດ້ຍິນ ສິ່ງທີ່ນັກຮຽນກຳລັງເວົ້າ ແລະ ເຮັດຢູ່ ແລະ ສາມາດເຮັດການປະເມີນນັກຮຽນໄດ້ດີຂຶ້ນຕື່ມອີກ.

ຄູສອນຈະຂຽນຄະແນນການປະເມີນໃສ່ປື້ມບັນທຶກໃນຂະນະທີ່ກຳລັງປະຕິບັດກິດຈະກຳນັ້ນຢູ່ ຂອງຄູສອນ.

ການຕັ້ງຄຳຖາມແມ່ນເຕັກນິກທີ່ສຳຄັນສຳລັບການປະເມີນຜົນ, ບາງຄັ້ງນັກຮຽນຄົນໃດ ຄົນໜຶ່ງ ອາດຮູ້ຄຳຕອບແລ້ວແຕ່ອາດຕ້ອງການໃຫ້ມີການກະຕຸ້ນຈາກຄູຕື່ມ.

ຄູສອນບໍ່ສາມາດປະເມີນນັກຮຽນໝົດທຸກຄົນພາຍໃນກິດຈະກຳດຽວ, ຄູສອນອາດເຮັດການປະ ເມີນນັກຮຽນປະມານ 10 ຄົນ ( ສ່ວນທີ່ຍັງເຫຼືອອາດຈະໄດ້ຮັບການປະເມີນໃນຂັ້ນຕອນສະຫຼຸບບົດຮຽນ ຫຼື ໃນບົດສອນບົດຕໍ່ໄປ ).

ຄະແນນຂອງນັກຮຽນ ຫານ ຄະແນນສູງສຸດໃນເກນການປະເມີນ ຄູນໃຫ້ ສິບ ( ປັດຕົວເສດຂຶ້ນ ລົງຕາມຄວາມເໝາະສົມ ) ຖ້າ ນັກສຶກສາພົບຄວາມຫຍຸ້ງຍາກໃນການປ່ຽນຄະແນນໃຫ້ມາເປັນຄະແນນ ສ່ວນ 10 ພວກເຮົາສາມາດອີງໃສ່ຮ່າງຕາຕະລາງໃນພາກແນະນຳລວມຂອງຄູ່ມືຄູວິຊາພາສາລາວຊັ້ນປະຖົມ ສຶກສາປີທີ 2 ເຫຼັ້ມ 1 ໜ້າທີ 7 .

## 3. ການນຳໃຊ້ເກນການປະເມີນແບບຮູບຮູກ

### ວິຊາ ສິລະປະກຳ ແລະ ຫັດຖະກຳ ( ບົດທີ 20 )

ໃຫ້ນັກສຶກສາຄູເບິ່ງຮູບພາບຄູກຳລັງສອນວິຊາສິລະປະກຳ ແລະ ຫັດຖະກຳ ບົດທີ 20 ໂດຍນຳໃຊ້ເກນ ການປະເມີນ ອ່ານເກນການປະເມີນ ແລ້ວສັງເກດນັກຮຽນ 3 ຄົນ, ນັກຮຽນ ກ , ນັດຮຽນ ຂ , ນັກຮຽນ ຄ ໂດຍການເບິ່ງຮູບພາບລຸ່ມນີ້ແລ້ວໃຫ້ຄະແນນນັກຮຽນຕາມເກນນັ້ນ.

ນັກຮຽນ ກ



ນັກຮຽນ ຂ



ນັກຮຽນ ຄ



| ຄຳເຫັນ ແລະ ຄຳຕອບ ລາຍວິຊາ ສິລະປະກຳ ແລະ ຫັດຖະກຳ | | |
|---|---|---|
| ນັກຮຽນ ກ: | ນັກຮຽນ ຂ : | ນັກຮຽນ ຄ : |
| ນັກຮຽນ ກ ........................................................................................................<br>ນັກຮຽນ ຂ ........................................................................................................<br>ນັກຮຽນ ຄ ........................................................................................................ | | |

**ວິຊາ ຄຸນສົມບັດສຶກສາ**

ນັກສຶກສາເບິ່ງປຶ້ມຄູ່ມືຄູ ບົດທີ 4 ອ່ານເກນການປະເມີນ ແລ້ວສັງເກດນັກຮຽນ 3 ຄົນ, ນັກຮຽນ ກ , ນັດຮຽນ ຂ , ນັກຮຽນ ຄ ໂດຍການເບິ່ງຮູບພາບລຸ່ມນີ້ແລ້ວໃຫ້ຄະແນນນັກຮຽນຕາມເກນນັ້ນ.

ວິຊາຄຸນສົມບັດສຶກສາ (ບົດທີ 4)



| ຄຳເຫັນ ແລະ ຄຳຕອບ ລາຍວິຊາ ຄູນສົມບັດສຶກສາ | | |
|---|---|---|
| ນັກຮຽນ ກ : | ນັກຮຽນ ຂ: | ນັກຮຽນ ຄ : |
| ນັກຮຽນ ກ .........................................................................................<br>ນັກຮຽນ ຂ .........................................................................................<br>ນັກຮຽນ ຄ ......................................................................................... | | |

ວິຊາພາສາລາວ: ອ່ານ ແລະ ຂຽນ (ບົດທີ 12, ກິດຈະກຳ 17, ແຜນການປະເມີນ 13)

**ນັກຮຽນ ກ**




**ນັກຮຽນ ຂ**




**ນັກຮຽນ ຄ**



| ຄຳເຫັນ ແລະ ຄຳຕອບ ລາຍວິຊາ ພາສາລາວ ( ອ່ານ ແລະ ຂຽນ ) | | |
|---|---|---|
| ນັກຮຽນ ກ : | ນັກຮຽນ ຂ : | ນັກຮຽນ ຄ : |
| ນັກຮຽນ ກ ..........................................................................................................<br>ນັກຮຽນ ຂ ..........................................................................................................<br>ນັກຮຽນ ຄ .......................................................................................................... | | |

ວິຊາພາສາລາວ: ເວົ້າ ແລະ ຟັງ (ບົດທີ 12, ກິດຈະກຳ 13, ເກນການປະເມີນ 18)



<table>
<tr><td colspan="3">ຄຳເຫັນ ແລະ ຄຳຕອບ ລາຍວິຊາ ພາສາລາວ ( ເວົ້າ ແລະ ຟັງ )</td></tr>
<tr><td>ນັກຮຽນ ກ :</td><td>ນັກຮຽນ ຂ :</td><td>ນັກຮຽນ ຄ :</td></tr>
<tr><td colspan="3">ນັກຮຽນ ກ ..........................................................................................<br>ນັກຮຽນ ຂ ..........................................................................................<br>ນັກຮຽນ ຄ ..........................................................................................</td></tr>
</table>

## 4. ແຜນຕາຕະລາງສຳລັບການປະເມີນຜົນ

ການກຳນົດເກນການປະເມີນຢ່າງໜ້ອຍສຸດ, ຄູສອນ ຄວນເຮັດການປະເມີນຜົນການຮຽນຂອງນັກຮຽນແຕ່ລະຄົນດັ່ງລຸ່ມນີ້: ສອງຄັ້ງຕໍ່ເດືອນສຳລັບວິຊາ ວິທະຍາສາດ ແລະ ສິ່ງແວດລ້ອມ, ສິລະປະ ແລະ ຫັດຖະກຳ. ດົນຕີ, ພະລະສຶກສາ, ຄຸນສົມບັດສຶກສາ.

4 ຄັ້ງຕໍ່ເດືອນສຳລັບວິຊາພາສາລາວ: ແຕ່ລະຄັ້ງຕ້ອງປະເມີນໜຶ່ງໃນ 4 ຂົງເຂດດັ່ງຕໍ່ໄປນີ້:

1. ການເວົ້າ ແລະ ຟັງ, 2. ການອ່ານ, 3. ການຂຽນ, 4. ການອ່ານປຶ້ມນິທານ ຫຼື ການອ່ານປຶ້ມອ່ານເສີມ. ການໃຫ້ຄະແນນດັ່ງກ່າວນີ້ ຕ້ອງໄດ້ຮັບການຈົດບັນທຶກໄວ້ໃນປຶ້ມບັນທຶກທີ່ທາງຫ້ອງການສຶກສາ ແລະ ກິລາເມືອງສະໜອງໃຫ້, ບໍ່ແມ່ນປຶ້ມຮຽກຊື່ທີ່ກຳລັງຢູ່ໃນຂັ້ນຕອນການປັບປຸງຢູ່ໃນຂະນະນີ້. ແຕ່ລະເດືອນ. ຄູສອນ ຈຳເປັນຕ້ອງຄິດກ່ອນລວງໜ້າວ່າ ຈະເຮັດການປະເມີນຜົນໃນເວລາໃດ.

## 5. ການວັດ ແລະ ປະເມີນ.

### 5.1 ການປະເມີນຜົນ.

ອ່ານລາຍລະອຽດຂໍ້ຄວາມດ້ານລຸ່ມນີ້ ແລ້ວຕື່ມຄຳສັບທີ່ໃຫ້ມາໃສ່ໃນບ່ອນວ່າງ.

<table>
<tr><td>ຈຸດປະສົງຂອງການຮຽນ ( × 2 ) ໃນຂະນະທີ່ ຮຽນມາ ການສັງເກດ ຂັ້ນສະຫຼຸບ<br>ຂັ້ນເຝິກປະຕິບັດ ແລະ ນຳໃຊ້</td></tr>
<tr><td>ການປະເມີນຜົນ ແມ່ນມີຄວາມສຳຄັນຫຼາຍ ເພາະມັນຈະເຮັດໃຫ້ຄູສອນຄູຮູ້ ກ່ຽວກັບສິ່ງທີ່ນັກຮຽນຂອງຕົນ<br>ໄດ້_____________ ຫຼັກສູດສະບັບປັບປຸງໃໝ່ແມ່ນໄດ້ກວມລວມເອົາທັງການປະເມີນຜົນ ເພື່ອປັບປຸງການຮຽນ ແລະ ການປະເມີນເພື່ອສະຫຼຸບຜົນການຮຽນ.<br>ການປະເມີນຜົນເພື່ອປັບປຸງການຮຽນແມ່ນດຳເນີນໄປ_______________ ກຳລັງຮຽນບົດຮຽນດັ່ງກ່າວຢູ່ ຊຶ່ງການປະເມີນຜົນດັ່ງກ່າວນີ້ ຈະຊ່ວຍໃຫ້ຄູສອນສາມາດຮັບຮູ້ໄດ້ກ່ຽວກັບຄວາມຫຍຸ້ງຍາກທີ່ນັກຮຽນກຳລັງປະເຊີນຢູ່ ແລະ ການຊ່ວຍເຫຼືອເພີ່ມເຕີມ ທີ່ພວກເຂົາສາມາດສະໜອງໃຫ້ແກ່ນັກຮຽນເພື່ອຊ່ວຍໃຫ້ພວກເຂົາສາມາດບັນລຸໄດ້____________________________ . ການປະເມີນຜົນເພື່ອປັບປຸງການຮຽນ ແມ່ນສາມາດປະຕິບັດໄດ້ໃນທຸກໄລຍະເວລາທີ່ກຳລັງສອນບົດຮຽນດັ່ງກ່າວຢູ່ ແລະ ສ່ວນໃຫຍ່ແມ່ນຈະເປັນການຖາມຄຳ ຖາມເພື່ອກວດສອບເບິ່ງຄວາມເຂົ້າໃຈ ແລະ _____________</td></tr>
</table>

ຂອງພວກນັກຮຽນເພື່ອທີ່ຈະສັງເກດເບິ່ງວ່າ ພວກເຂົາກໍາລັງເອົາສິ່ງທີ່ຮຽນຮູ້ຢູ່ນັ້ນໄປນໍາໃຊ້ໄດ້ ຫຼື ບໍ. ການປະເມີນ ເພື່ອສະຫຼຸບຜົນການຮຽນຈະຖືກນໍາໃຊ້ ເພື່ອກວດສອບເບິ່ງວ່າ ນັກຮຽນສາມາດບັນລຸໄດ້____________________________ ຫຼືບໍ ໂດຍທົ່ວໄປແລ້ວ. ການປະເມີນດັ່ງກ່າວນີ້ ຈະດໍາເນີນການໃນ______________________________ ຫຼື ___________________________ ຄູສອນຈະນໍາໃຊ້ເກນການໃຫ້ຄະແນນ ເພື່ອຈະເຮັດການປະເມີນຜົນການຮຽນຂອງນັກຮຽນ ແລະ ໃຫ້ຄະແນນແກ່ພວກເຂົາ.

## 5.2 ການປະເມີນເພື່ອສະຫຼຸບຜົນການຮຽນ

**ຄໍາແນະນໍາ:**

ເວົ້າເຖິງພາບເຫດການຢູ່ຂ້າງລຸ່ມນີ້ໃຫ້ນັກສຶກສາຟັງ, ອ່ານບົດເນື້ອໃນບົດສອນ ແລະ ເກນການປະເມີນທີ່ກ່ຽວຂ້ອງ, ໃຫ້ຄະແນນນັກຮຽນແຕ່ລະຄົນໄປຕາມເກນການປະເມີນ ແລ້ວປັບປ່ຽນໃຫ້ເປັນຄະແນນສ່ວນສິບ

1. ວິຊາວິທະຍາສາດ ແລະ ສິ່ງແວດລ້ອມ, ບົດທີ 17



| ຄຳເຫັນ ແລະ ຄຳຕອບ ລາຍວິຊາ ວິທະຍາສາດ ແລະ ສິງແວດລ້ອມ | | |
|---|---|---|
| ນັກຮຽນ ກ : | ນັກຮຽນ ຂ : | ນັກຮຽນ ຄ : |
| ນັກຮຽນ ກ ..........................................................................................................<br>ນັກຮຽນ ຂ ..........................................................................................................<br>ນັກຮຽນ ຄ .......................................................................................................... | | |

2. ວິຊາຄຸນສົມບັດ, ບົດທີ 26

(1) ຄູ: "ທຸກຄົນເບິ່ງຮູບນີ້ ແລະ ໃຫ້ບອກວ່າພວກ ຫຼານຈະເຮັດຄືແນວໃດ ເພື່ອສະແດງຄວາມນັບຖື ຕໍ່ກັບສະຖານທີ່"

(2) ນັກຮຽນ ກ: "ບໍ່ ລົມກັນສຽງດັງ"

(3) ຄູ: "ແລະ..."

(4) ນັກຮຽນ ກ: "ບໍ່ ແລ່ນ"



(5) ນັກຮຽນ ຂ: "ບໍ່ ແລ່ນ"

(6) ນັກຮຽນ ຄ: "ບໍ່ ຖິ້ມນ້ຳລາຍລົງພື້ນ ແລະ ບໍ່ແລ່ນ"

(7) ຄູ: "ມີຫຍັງອີກ?"

(8) ນັກຮຽນ ຄ: "ບໍ່ ຢອກກັນສຽງດັງ"

(9) ຄູ: "ເກັ່ງຫຼາຍ. ຊົມເຊີຍ"

| ຄຳເຫັນ ແລະ ຄຳຕອບ ລາຍວິຊາ ຄຸນສົມບັດສຶກສາ | | |
|---|---|---|
| ນັກຮຽນ ກ : | ນັກຮຽນ ຂ : | ນັກຮຽນ ຄ : |
| ນັກຮຽນ ກ ........................................................................................................<br>ນັກຮຽນ ຂ ........................................................................................................<br>ນັກຮຽນ ຄ ........................................................................................................ | | |

3. ວິຊາສິລະປະດົນຕີ, ບົດທີ 23



| ຄຳເຫັນ ແລະ ຄຳຕອບ ລາຍວິຊາ ສິລະປະດົນຕີ | | |
|---|---|---|
| ນັກຮຽນ ກ : | ນັກຮຽນ ຂ : | ນັກຮຽນ ຄ : |
| ນັກຮຽນ ກ ..........................................................................................<br>ນັກຮຽນ ຂ ..........................................................................................<br>ນັກຮຽນ ຄ .......................................................................................... | | |

4. ວິຊາສິລະປະກຳ ແລະ ຫັດຖະກຳ, ບົດທີ 15




5. ວິຊາພາສາລາວ ບົດທີ 6, ກິດຈະກຳ 14 , ຕາມການປະເມີນແບບຣູບຣິກ 4 (ຫັດອ່ານ)



| ຄຳເຫັນ ແລະ ຄຳຕອບ ລາຍວິຊາ ສິລະປະກຳ ແລະ ຫັດຖະກຳ | | |
|---|---|---|
| ນັກຮຽນ ກ : | ນັກຮຽນ ຂ : | ນັກຮຽນ ຄ : |
| ນັກຮຽນ ກ ......................................................................................................<br>ນັກຮຽນ ຂ ......................................................................................................<br>ນັກຮຽນ ຄ ...................................................................................................... | | |

6. ວິຊາພາສາລາວ ບົດທີ 6, ກິດຈະກຳ 17, ເກນການປະເມີນແບບຮູບທີກ 13 (ຫັດຂຽນ)

ນັກຮຽນ ກ


- ຂ້ອຍມັກໝາກກ້ວຍຍ້ອນວ່າມັນ ຫວານແລະປອກງ່າຍ
- ຂ້ອຍບໍ່ມັກໝາກຫຸ່ງຍ້ອນວ່າມັນມີແກ່ນ ຫຼາຍແລະກິນຍາກ
- ຂ້ອຍມັກໝາກໂມຍ້ອນວ່າມັນມີນ້ຳຫຼາຍ
- ຂ້ອຍບໍ່ມັກໝາກເຫນເອຍ້ອນວ່າມັນສົ້ມ

ນັກຮຽນ ຂ


- ຂ້ອຍມັກໝາກອາໂປຍ້ອນວ່າມັນ ມີນ້ຳຫຼາຍ
- ຂ້ອຍບໍ່ມັກໝາກ [illegible] ຍ້ອນວ່າມັນເຜັດ
- ຂ້ອຍບໍ່ມັກໝາກນາວຍ້ອນວ່າມັນສົ້ມ

| ຄຳເຫັນ ແລະ ຄຳຕອບ ລາຍວິຊາ ພາສາລາວ ( ຫັດຂຽນ ) | | |
|---|---|---|
| ນັກຮຽນ ກ : | ນັກຮຽນ ຂ : | ນັກຮຽນ ຄ : |
| ນັກຮຽນ ກ ...........................................................................................................<br>ນັກຮຽນ ຂ ...........................................................................................................<br>ນັກຮຽນ ຄ ........................................................................................................... | | |

**5.3 ຕໍ່ໄປແມ່ນໜ້າທີ່ຂອງນັກສຶກສາ**

ເລີ່ມຕົ້ນນຳໃຊ້ປຶດແນະນຳ ກ່ຽວກັບການປະເມີນຜົນໃນລາຍລະອຽດຂອງປຶດຮຽນ. ໃຊ້ປຶ້ມບັນທຶກໜຶ່ງ ຫຼືວຕໍ່ໜຶ່ງວິຊາ ເພື່ອບັນທຶກກ່ຽວກັບຄະແນນການປະເມີນຜົນການຮຽນຂອງນັກຮຽນ ໂດຍເຮັດແນວໃດ ໃຫ້ ການຈົດບັນທຶກເປັນໄປແບບງ່າຍດາຍ ແລະ ໃຫ້ສາມາດໂອນຍ້າຍການປະເມີນຜົນດັ່ງກ່າວໄປຫາໃບ ບັກທຶກຄະແນນຢ່າງເປັນທາງການໄດ້, ເມື່ອເຮັດການວາງແຜນການສອນ ແລະ ຕື່ມລາຍລະອຽດໃສ່ໃນປຶດ ສອນແລ້ວ, ໃຫ້ໝາຍໃສ່ວ່າ ນັກສຶກສາຈະເຮັດການປະເມີນການຮຽນຂອງນັກຮຽນແບບໃດ.